ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້
ກົມລ້ຽງສັດ ແລະ ການປະມົງ

# ມາດຕະຖານປະຕິບັດງານໃນການປະເມີນຄວາມສ່ຽງ ກ່ອນການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ງົວ - ຄວາຍ ມີຊີວິດ ຂອງ ສປປ ລາວ

ລະຫັດມາດຕະຖານ : **ມກປ-ລປ-2021-00008**
**STDCODE : AFSTD-LF-2021-00008**

ນະຄອນຫຼວງວຽງຈັນ, **ປີ 2021**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້
ກົມລ້ຽງສັດ ແລະ ການປະມົງ

# ມາດຕະຖານປະຕິບັດງານໃນການປະເມີນຄວາມສ່ຽງກ່ອນການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ງົວ, ຄວາຍ ມີຊີວິດ ຂອງ ສປປ ລາວ

ລະຫັດມາດຕະຖານ: **ມກປ-ລປ-2021-00008**
**STDCODE : AFSTD-LF-2021-00008**


ອົງການສ້າງມາດຕະຖານ:
ກົມລ້ຽງສັດ ແລະ ການປະມົງ
ຖະໜົນ ສຸພານຸວົງ, ບ້ານສີຖານເໜືອ, ເມືອງສີໂຄດຕະບອງ.
ນະຄອນຫຼວງວຽງຈັນ, ສປປ ລາວ, ຕປນ. **6644**
ເບີໂທລະສັບ: **+856 21 215242-3**
ເບີໂທລະສານ:**+856 21 215141**
ເວບໄຊທ: **http://dlf.maf.gov.la**


ນະຄອນຫຼວງວຽງຈັນ, ປີ **2021**

# ສາລະບານ


1. ຈຸດປະສົງ ........ 2
2. ຂອບເຂດການນຳໃຊ້ ........ 2
3. ການອະທິບາຍຄຳສັບ ........ 2
4. ການກະກຽມຄວາມພ້ອມດ້ານບຸກຄະລາກອນ ........ 3
5. ຂັ້ນຕອນປະຕິບັດສຳລັບຜູ້ຄ້າສັດ ........ 3
6. ຂັ້ນຕອນການປະຕິບັດງານກ່ຽວກັບການອອກໃບອະນຸມັດນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ........ 5
7. ຂັ້ນຕອນການປະຕິບັດງານການກວດກາງົວ, ຄວາຍ ຢູ່ດ່ານກວດກາສັດຕະວະແພດສາກົນ ........ 7
8. ຂັ້ນຕອນການປະຕິບັດງານການຄຸ້ມຄອງຄວາມສ່ຽງຫຼັງການນຳເຂົ້າງົວ, ຄວາຍ ມີຊີວິດ ........ 9
   - 8.1. ສຳລັບ ງົວ, ຄວາຍ ມີຊີວິດ ນຳເຂົ້າມາເພື່ອລ້ຽງເປັນແນວພັນ ........ 9
   - 8.2. ສຳລັບ ງົວ, ຄວາຍມີຊີວິດ ເພື່ອນຳມາຂ້າ ........ 10
   - 8.3. ສຳລັບ ງົວ, ຄວາຍ ມີຊີວິດ ເພື່ອຂົນສົ່ງ ແລະ ນຳອອກໄປປະເທດທີ່ 3 ........ 11
9. ການລາຍງານການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ງົວ, ຄວາຍມີຊີວິດ ........ 13

# ຄຳນຳ

ການຄ້າ ງົວ, ຄວາຍ ມີຊີວິດ ມີບົດບາດສຳຄັນຕໍ່ເສດຖະກິດ ແລະ ສັງຄົມ ຂອງ ສປປ ລາວ ແລະ ປະເທດພາກພື້ນແມ່ນ້ຳຂອງ. ຊຶ່ງເຫັນວ່າ ໃນຊຸມປີຜ່ານມາ ໄດ້ມີການນຳ ງົວ, ຄວາຍ ມີຊີວິດ ຈາກ ສປປ ລາວ ຫຼື ຜ່ານ ສປປ ລາວ ໄປຍັງມີ ສປ ຈີນ ແລະ ສສ ຫວຽດນາມ ນັບມື້ນັບເພີ່ມຂຶ້ນ  ຊຶ່ງການຄ້າຂາຍ ງົວ, ຄວາຍ ມີຊີວິດ ດັ່ງກ່າວນັ້ນ ແມ່ນເປັນຜົນດີ ແຕ່ສ່ວນໃຫຍ່ແລ້ວຍັງແມ່ນການຄ້າທີ່ບໍ່ເປັນທາງການ ແລະ ໄດ້ເກີດຄວາມສ່ຽງຢ່າງໃຫຍ່ຫຼວງ ຕໍ່ ສປປ ລາວ ທີ່ຈະຮັບເອົາພະຍາດປະຈຳຖິ່ນ ຫຼື ພະຍາດຕ່າງຖິ່ນເຂົ້າມາລະບາດຢູ່ ສປປ ລາວເພີ່ມຂຶ້ນ.

ສະນັ້ນເພື່ອເປັນການຫຼຸດຜ່ອນຄວາມສ່ຽງ ແລະ ເຮັດໃຫ້ ສປປ ລາວ ມີ ມາດຕະຖານປະຕິບັດ ທີ່ສອດຄ່ອງກັບກົດໝາຍ, ລະບຽບການ ແລະ ຄຳແນະນຳຂອງອົງການສຸຂະພາບສັດສາກົນ ແລະ ສອດຄ່ອງກັບສັນຍາສົນທິສັນຍາທີ່ ສປປ ລາວເຮົາເຂົ້າເປັນພາຄີ ກົມລ້ຽງສັດ ແລະ ການປະມົງ ຈຶ່ງໄດ້ສ້າງມາດຕະຖານສະບັບນີ້ຂຶ້ນ ເພື່ອໃຫ້ ສປປ ລາວ ມີມາດຕະຖານ ການວິເຄາະ ແລະ ຄຸ້ມຄອງຄວາມສ່ຽງ ທີ່ມີປະສິດທິຜົນ ທັງນີ້ ກໍເພື່ອປ້ອງກັນ ແລະ ຫຼຸດຜ່ອນສິ່ງທີ່ເປັນອັນຕະລາຍ ທີ່ຈະເກີດຂຶ້ນ ຈາກການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ງົວ, ຄວາຍ ມີຊີວິດ ພ້ອມທັງຈະຊ່ວຍຍົກລະດັບ ການຄຸ້ມຄອງການເຄື່ອນຍ້າຍ, ຕິດຕາມ ກວດກາ, ການບັນທຶກ ການຄ້າຂາຍ ງົວ, ຄວາຍ ມີຊີວິດ ໃຫ້ມີປະສິດທິພາບສູງຂຶ້ນ.

ກົມລ້ຽງສັດ ແລະ ການປະມົງ ຫວັງຢ່າງຍິ່ງວ່າ ມາດຕະຖານສະບັບນີ້ ຈະຊ່ວຍໃຫ້ພະນັກງານ ແລະ ຜູ້ຄ້າຂາຍສັດ ປະຕິບັດ ກົດໝາຍວ່າດ້ວຍການລ້ຽງສັດ ແລະ ສັດຕະວະແພດ ແລະ ນິຕິກຳທີ່ກ່ຽວຂ້ອງ ຂອງ ສປປ ລາວ ແລະ ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງໃນການປະຕິບັດມາດຕະການດ້ານສຸຂານາໄມ,  ການຄວບຄຸມພະຍາດສັດຂ້າມຊາຍແດນ, ພະຍາດສັດຕິດຕໍ່ສູ່ຄົນ ແລະ ເກີດການຄ້າສັດທີ່ປອດໄພ, ມີຄຸນນະພາບ, ເພີ່ມມູນຄ່າຂອງສິນຄ້າສັດ ແລະ ຄວາມສາມາດແຂ່ງຂັນດ້ານການຄ້າຂອງ ສປປ ລາວ ໃຫ້ເພີ່ມສູງຂຶ້ນ.

ອອກທີ່: ນະຄອນຫຼວງວຽງຈັນ, ວັນທີ 28 DEC 2021

ອອກໂດຍ: ຫ້ອງກົມລ້ຽງສັດ ແລະ ການປະມົງ

ກະຊວງກະສິກຳແລະປ່າໄມ້ — ກົມລ້ຽງສັດແລະການປະມົງ

ນ. ວິໄລພອນ ວໍລະພິມ

1. **ຈຸດປະສົງ**

ມາດຕະຖານການປະຕິບັດງານສະບັບນີ້ ກຳນົດຫຼັກການ, ລະບຽບການ, ມາດຕະການ ແລະ ຂັ້ນຕອນ ກ່ຽວກັບການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ງົວ, ຄວາຍ ມີຊີວິດ ເພື່ອຫຼຸດຜ່ອນຄວາມສ່ຽງການເຂົ້າມາ ຂອງພະຍາດສັດ, ວັດຖຸ, ສານເຄມີ ແລະ ອື່ນໆ ທີ່ເປັນອັນຕະລາຍ ທີ່ຈະເກີດຂຶ້ນ ຈາກການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດ ດັ່ງກ່າວ ແນໃສ່ປົກປ້ອງການຜະລິດສັດຢູ່ພາຍໃນ ແລະ ສົ່ງເສີມທາງການຄ້າສັດທີ່ປອດໄພ.

2. **ຂອບເຂດການນຳໃຊ້**

ມາດຕະຖານຂັ້ນຕອນການປະຕິບັດງານສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ກ່ຽວຂ້ອງກັບຄຸ້ມຄອງ ແລະ ດຳເນີນການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ງົວ, ຄວາຍ ມີຊີວິດ ຢູ່ ສປປ ລາວ.

3. **ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນມາດຕະຖານຂັ້ນຕອນການປະຕິບັດງານ ສະບັບນີ້ ມີຄວາມໝາຍ ດັ່ງນີ້:

1) **ຄວາມສ່ຽງ** ໝາຍເຖິງ ຄວາມເປັນໄປໄດ້ຂອງເຫດການທີ່ບໍ່ດີ ໃນການ ກໍ່ຕິດ ແລະ ຂະຫຍາຍຕົວອອກເປັນວົງກ້ວາງ ທີ່ຈະມີຜົນກະທົບຕໍ່ ເສດຖະກິດ, ຊີວິດ ແລະ ສຸຂະພາບ ຂອງ ຄົນ ຫຼື ສັດ;
2) **ການວິເຄາະຄວາມສ່ຽງ** ໝາຍເຖິງ ຂະບວນການ ທີ່ປະກອບດ້ວຍ: ການກຳນົດ, ການປະເມີນ, ການຄຸ້ມຄອງ ແລະ ການສື່ສານຄວາມສ່ຽງ;
3) **ການປະເມີນຄວາມສ່ຽງ** ໝາຍເຖິງ ການປະເມີນຄວາມເປັນໄປໄດ້ ຂອງຜົນກະທົບທາງລົບ ຕໍ່ເສດຖະກິດ, ຊີວິດ ແລະ ສຸຂະພາບ ຂອງຄົນ ແລະ ສັດ ທີ່ເກີດຈາກການກໍ່ຕິດ, ເຂົ້າມາກໍ່ຕິດ. ສ້າງຄວາມເສຍຫາຍ ຫຼື ແຜ່ກະຈາຍ ສິ່ງທີ່ເປັນອັນຕະລາຍ ຢູ່ໃນ ສປປ ລາວ;
4) **ການຄຸ້ມຄອງຄວາມສ່ຽງ** ໝາຍເຖິງ ຂັ້ນຕອນຂອງການກຳນົດ, ຄັດເລືອກ ແລະ ການຈັດຕັ້ງປະຕິບັດມາດຕະການເພື່ອຫຼຸດຜ່ອນຄວາມສ່ຽງ;
5) **ເຊື້ອພະຍາດ** ໝາຍເຖິງ ຈຸລິນຊີ, ແມ່ກາຝາກ ແລະ ເຊື້ອລາ ທີ່ກໍ່ໃຫ້ເກີດ ຫຼື ປະກອບສ່ວນກໍ່ໃຫ້ເກີດພະຍາດໃດໜຶ່ງ;
6) **ພະຍາດສັດທີ່ຈຳເປັນຕ້ອງແຈ້ງ** ໝາຍເຖິງ ພະຍາດສັດຮ້າຍແຮງ ທີ່ສາມາດຕິດຕໍ່ຈາກສັດສູ່ສັດ ຫຼື ຈາກສັດສູ່ຄົນ, ແຜ່ລາມໄວ, ສົ່ງຜົນກະທົບທາງລົບຕໍ່ຊີວິດ, ເສດຖະກິດ ແລະ ສັງຄົມ ທີ່ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ກຳນົດ;
7) **ຜູ້ຄ້າສັດ** ໝາຍເຖິງ ຜູ້ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ງົວ, ຄວາຍ ມີຊີວິດ;
8) **ອົງການສັດຕະວະແພດ** ໝາຍເຖິງ ອົງການລັດຂອງປະເທດສະມາຊິກຂອງອົງການສຸຂະພາບສັດສາກົນ ທີ່ປະກອບມີພະນັກງານສັດຕະວະແພດ ແລະ ນັກວິຊາຊີບອື່ນ ທີ່ໄດ້ຮັບມອບໝາຍຈາກອົງການທີ່ມີອຳນາດ ໃຫ້ຮັບຜິດຊອບ ແລະ ປະຕິບັດວຽກງານດ້ານສຸຂະພາບສັດ;
9) **ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ** ໝາຍເຖິງ ກະຊວງກະສິກຳ ແລະ ປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ, ກົມລ້ຽງສັດ ແລະ ການປະມົງ, ຂະແໜງລ້ຽງສັດ ແລະ ການປະມົງ ແລະ ດ່ານກວດກາສັດຕະວະແພດ;
10) **ອົງການສຸຂະພາບສັດສາກົນ** ໝາຍເຖິງ ອົງການໂອໄອອີ ຫຼື ອົງການຈັດຕັ້ງສາກົນ ທີ່ຮັບຜິດຊອບວຽກງານສຸຂະພາບສັດບົກ ແລະ ສັດນ້ຳ;

11) **ເຈົ້າໜ້າທີ່ສັດຕະວະແພດ** ໝາຍເຖິງ ພະນັກງານສັດຕະວະແພດ ຫຼື ພະນັກງານອື່ນທີ່ໄດ້ຮັບມອບໝາຍ ຈາກອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ເພື່ອໃຫ້ປະຕິບັດໜ້າທີ່ ກວດກາດ້ານສັດຕະວະແພດ;
12) **ການອະນຸມັດ** ໝາຍເຖິງ ຂະບວນການ ປະເມີນຄວາມສ່ຽງ, ການພິຈາລະນາ ແລະ ອອກໃບອະນຸມັດນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ງົວ, ຄວາຍ ມີຊີວິດ ໂດຍອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ໃຫ້ຜູ້ຄ້າສັດ ຕາມເງື່ອນໄຂການນຳເຂົ້າ ທີ່ໄດ້ກຳນົດໄວ້ ໃນມາດຕະຖານສະບັບນີ້;
13) **ມາດຕະການດ້ານສຸຂານາໄມ** ໝາຍເຖິງ ມາດຕະການໃດໜຶ່ງ ທີ່ນຳໃຊ້ເພື່ອປົກປ້ອງ ປະເທດຊາດ, ຊີວິດ ຫຼື ສຸຂະພາບຂອງຄົນ ຫຼື ສັດ ຢູ່ພາຍໃນ ສປປ ລາວ ບໍ່ໃຫ້ໄດ້ຮັບຄວາມສ່ຽງ ຈາກທາດເພີ່ມ, ສານປົນເປື້ອນ, ສານພິດ ແລະ ເຊື້ອຈຸລິນຊີ ທີ່ເປັນສາເຫດ ຂອງພະຍາດ ຄົນ ແລະ ສັດ ທີ່ອາດມີຢູ່ໃນຜະລິດຕະພັນສິນຄ້າກ່ຽວກັບສັດ;
14) **ການຂົນສົ່ງ** ໝາຍເຖິງ ການບັນຈຸ, ການບັນທຸກ ແລະ ຂົນຍ້າຍ ສັດປະເພດ ງົວ, ຄວາຍ ໂດຍທາງບົກ, ທາງນ້ຳ ຫຼື ທາງອາກາດ.

## 4. ການກະກຽມຄວາມພ້ອມດ້ານບຸກຄະລາກອນ

ໂດຍອີງຕາມການຊີ້ນຳ ຂອງ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້, ກົມລ້ຽງສັດ ແລະ ການປະມົງ ຕ້ອງໄດ້ແຕ່ງຕັ້ງ ຄະນະກຳມະການປະເມີນຄວາມສ່ຽງ ໂດຍມີໜ້າທີ່ ຕົ້ນຕໍ ດັ່ງນີ້:

1). ເປັນເສນາທິການໃຫ້ແກ່ກົມລ້ຽງສັດ ແລະ ການປະມົງ ໃນການປະເມີນຄວາມສ່ຽງ ທີ່ກ່ຽວຂ້ອງກັບການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດມີຊີວິດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ຂອງ ສປປ ລາວ;

2). ອອກແບບພິມ ເພື່ອການປະເມີນຄວາມສ່ຽງ;

3). ຄົ້ນຄວ້າ ແລະ ພິຈາລະນາ ຂໍ້ມູນທີ່ສະໜອງໂດຍຜູ້ຄ້າສັດ;

4). ສະເໜີ ພະແນກສັດຕະວະແພດ ຮ່າງໜັງສືແຈ້ງຕອບ ຫຼື ໃບອະນຸມັດ ໃຫ້ແກ່ຜູ້ຄ້າສັດ;

5). ສະຫຼຸບລາຍງານການປະຕິບັດໜ້າທີ່ຕໍ່ຫົວໜ້າກົມລ້ຽງສັດ ແລະ ການປະມົງ.

## 5. ຂັ້ນຕອນປະຕິບັດສຳລັບຜູ້ຄ້າສັດ

**ຂັ້ນຕອນ-1:** ຂໍໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍພາສີ, ອາກອນ ແລະ ໃບອະນຸຍາດດຳເນີນທຸລະກິດກະສິກຳ ແລະ ປ່າໄມ້ ທີ່ກວມເອົາກິດຈະການລ້ຽງງົວ, ຄວາຍ ຈາກອົງການຄຸ້ມຄອງທີ່ກ່ຽວຂ້ອງ. ເອກະສານດັ່ງກ່າວນີ້ ຕ້ອງຖືກຕ້ອງ ແລະ ມີອາຍຸການນຳໃຊ້ໄດ້;

**ຂັ້ນຕອນ-2:** ສ້າງເຄືອຂ່າຍການຊື້ຂາຍສິນຄ້າຂອງຕົນ ໂດຍເຄືອຂ່າຍຕ້ອງແມ່ນຜູ້ປະກອບການລ້ຽງງົວ, ຄວາຍ ທີ່ໄດ້ຮັບການຂຶ້ນທະບຽນຟາມ, ມີໃບຢັ້ງຢືນມາດຕະຖານການປະຕິບັດຟາມລ້ຽງງົວ, ຄວາຍ ທີ່ດີ ຈາກກົມລ້ຽງສັດ ແລະ ການປະມົງ ພ້ອມທັງເປັນຜູ້ປະກອບການທີ່ໄດ້ຮັບການເຫັນດີ ຈາກອຳນາດການປົກຄອງທ້ອງຖິ່ນ ແລະ ປະຕິບັດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

**ຂັ້ນຕອນ-3:** ຂໍອະນຸມັດແຜນການນຳເຂົ້າ, ສົ່ງອອກ ຫຼື ສົ່ງຜ່ານ ງົວ, ຄວາຍ ປະຈຳປີ ຈາກພະແນກກະສິກຳ ແລະ ປ່າໄມ້; **ໂດຍຕ້ອງມີເອກະສານປະກອບດັ່ງນີ້:**

1) ໃບສະເໜີແຜນການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ງົວ, ຄວາຍ ປະຈຳປີ.
2) ສຳເນົາໜັງສືເດີນທາງ.
3) ສຳເນົາໃບທະບຽນວິສາຫະກິດ.

4) ສຳເນົາໃບອະນຸຍາດດຳເນີນທຸລະກິດກະສິກຳ ແລະ ປ່າໄມ້ ທີ່ອອກໃຫ້ໂດຍ ກະຊວງກະສິກຳ ແລະ ປ່າໄມ້ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ.
5) ໃບມອບສິດ ໃນກໍລະນີ ໃຫ້ຜູ້ຕາງໜ້າຂອງຜູ້ຄ້າສັດມາແລ່ນເອກະສານແທນ.
6) ໜັງສືສັນຍາລະຫວ່າງຄູ່ຄ້າ ແລະ ຜູ້ຄ້າສັດ.
7) ໃບທະບຽນຟາມລ້ຽງງົວ, ຄວາຍ.

ໃນການອອກການອະນຸມັດແຜນການນຳເຂົ້າ, ສົ່ງອອກ ຫຼື ສົ່ງຜ່ານ ງົວ, ຄວາຍ ປະຈຳປີ ຕ້ອງຜ່ານການປຶກ ສາຫາລືເຫັນດີຂອງຄະນະວິຊາການ ຂອງພະແນກກະສິກຳ ແລະ ປ່າໄມ້ ແລະ ກົມລ້ຽງສັດ ແລະ ການປະມົງ.

**ຂັ້ນຕອນ-4:** ສ້າງຄູ່ຄ້າ, ປະຕິບັດກົດໝາຍ ແລະ ລະບຽບການຂອງປະເທດຄູ່ຄ້າ ແລະ ປະສານງານກັບຄູ່ຄ້າ ໃນການຈັດກຽມເອກະສານໃຫ້ສອດຄ່ອງກັບລະບຽບຂອງ ສປປ ລາວ ແລະ ປະເທດຄູ່ຄ້າ;

**ຂັ້ນຕອນ-5:** ໃນການປະຕິບັດແຜນການນຳເຂົ້າ, ສົ່ງອອກ ຫຼື ສົ່ງຜ່ານງົວ, ຄວາຍ ຕົວຈິງໃຫ້ຜູ້ຄ້າສັດຍື່ນໃບຄຳຮ້ອງ ຂໍອະນຸດມັດຈາກກົມລ້ຽງສັດ ແລະ ການປະມົງ ຕາມແບບພິມ ຂອຜ-1 ພ້ອມດ້ວຍເອກະສານຄັດຕິດ ດັ່ງນີ້:
1) ແຜນການນຳເຂົ້າ ງົວ, ຄວາຍ ປະຈຳປີ ທີ່ອອກໃຫ້ ໂດຍອີງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ.
2) ສຳເນົາໜັງສືເດີນທາງ.
3) ສຳເນົາໃບທະບຽນວິສາຫະກິດ.
4) ໃບມອບສິດ ໃນກໍລະນີ ໃຫ້ຜູ້ຕາງໜ້າຂອງຜູ້ຄ້າສັດມາແລ່ນເອກະສານແທນ.
5) ສຳເນົາໃບອະນຸຍາດດຳເນີນທຸລະກິດກະສິກຳ ແລະ ປ່າໄມ້ ທີ່ອອກໃຫ້ໂດຍ ກະຊວງກະສິກຳ ແລະ ປ່າໄມ້ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ.

ພ້ອມນັ້ນໃຫ້ຜູ້ຄ້າສັດ ກຽມເອກະສານກ່ຽວຂ້ອງອື່ນ ຕາມທີ່ອົງການຄຸ້ມຄອງຮຽກຮ້ອງ ໃນເວລາທີ່ຈະນຳເຂົ້າ, ສົ່ງອອກ ຫຼື ສົ່ງຜ່ານຕົວຈິງ.

**ຂັ້ນຕອນ-6:** ພາຍຫຼັງທີ່ມີການກວດກາແລ້ວ ຫາກເຫັນວ່າ ຜູ້ຄ້າສັດ ສະໜອງເອກະສານ ແລະ ຂໍ້ມູນບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ຜູ້ຄ້າສັດຕ້ອງນຳໄປປັບປຸງແກ້ໄຂ ແລ້ວ ນຳເອົາມາຍື່ນໃໝ່;

**ຂັ້ນຕອນ-7:** ພາຍຫຼັງທີ່ຜູ້ຄ້າສັດ ໄດ້ຮັບການແຈ້ງການອະນຸມັດຈາກກົມລ້ຽງສັດ ແລະ ການປະມົງແລ້ວ ໃຫ້ມາຈ່າຍຄ່າທຳນຽມ ແລະ ບໍລິການ ແລະ ຮັບເອົາໃບອະນຸມັດໃນເວລາລັດຖະການ. ຈາກນັ້ນ ໃຫ້ແຈ້ງໃຫ້ຄູ່ຄ້າຂອງຕົນຊາບ ພ້ອມທັງກະກຽມສັດ, ພາຫະນະຂົນສົ່ງ ແລະ ປະຕິບັດບັນດາມາດຕະການດ້ານວິຊາການ ໃຫ້ຖືກຕ້ອງຕາມເງື່ອນໄຂ ແລະ ລະບຽບການຂອງ ສປປ ລາວ ແລະ ປະເທດຄູ່ຄ້າ;

**ຂັ້ນຕອນ-8:** ໃຫ້ຜູ້ຄ້າສັດປະສານກັບຄູ່ຄ້າ ຂອງຕົນ ກະກຽມ ງົວ, ຄວາຍ, ດຳເນີນການກັກກັນສັດ ກ່ອນການຂົນສົ່ງ 21 ວັນ ແລະ ເຮັດໃບຢັ້ງຢືນ ແຫຼ່ງທີ່ມາ, ເລກລະຫັດປະຈາໂຕ ຫຼື ກຸ່ມສັດ, ການສັກຢາກັນພະຍາດສັດ, ການຂ້າເຊື້ອພະຍາດ, ຂ້າແມ່ກາຝາກ, ການອອກໃບຢັ້ງຢືນສຸຂະພາບສັດ ແລະ ອື່ນໆ;

**ຂັ້ນຕອນ-9:** ນຳເອົາເອກະສານມາແຈ້ງ ຢູ່ດ່ານກວດກາສັດຕະວະແພດຊາຍແດນ ກ່ອນການນຳງົວ, ຄວາຍ ເຂົ້າມາຜ່ານດ່ານ 3 ວັນ ກ່ອນມື້ນຳງົວ, ຄວາຍ ມາດ່ານຕົວຈິງ ຕໍ່ເຈົ້າໜ້າທີ່ດ່ານກວດກາສັດຕະວະແພດຊາຍແດນສາກົນ ເພື່ອຮັບປະກັນໃຫ້ມີເອກະສານຖືກຕ້ອງຄົບຖ້ວນ ໂດຍຕ້ອງມີເອກະສານທີ່ຈະນຳມາແຈ້ງ ດັ່ງນີ້:
1) ໃບອະນຸມັດນຳເຂົ້າ, ສົ່ງອອກ ຫຼື ສົ່ງຜ່ານ ທີ່ອອກໃຫ້ໂດຍ ກົມລ້ຽງສັດ ແລະ ການປະມົງ.
2) ໃບຢັ້ງຢືນສຸຂະພາບສັດ (ມີອາຍຸນຳໃຊ້ ພາຍໃນ 7 ວັນ).

3) ໃບຢັ້ງຢືນການ ໃຫ້ວັກຊີນ (ຄົບ 21 ວັນ ກ່ອນມື້ສົ່ງອອກ).
4) ໃບຢັ້ງຢືນການກັກກັນ ຂອງສະຖານທີ່ກັກກັນ.
5) ລາຍການສິນຄ້າ ແລະ ການຫຸ້ມຫໍ່.
6) ໃບຢັ້ງຢືນກຳມະພັນສັດ.
7) ໃບຢັ້ງຢືນຜົນການວິໄຈ.
8) ໃບມອບສິດ ໃນກໍລະນີ ທີ່ໃຫ້ຕົວແທນຂອງຜູ້ຄ້າສັດມາແລ່ນເອກະສານ.
9) ໃນກໍລະນີສົ່ງຜ່ານ ຕ້ອງມີສຳເນົາໃບອະນຸຍາດສົ່ງອອກ ແລະ ນຳເຂົ້າ ທີ່ອອກໃຫ້ ໂດຍອົງການທີ່ມີອຳນາດຂອງປະເທດຕົ້ນທາງ ແລະ ປາຍທາງ.
10) ເອກະສານອື່ນຕາມການຮຽກຮ້ອງຂອງກົມລ້ຽງສັດ ແລະ ການປະມົງ.

**ຂັ້ນຕອນ-10:** ຮັບໃບຢັ້ງຢືນການແຈ້ງເອກະສານລ່ວງໜ້າ ແລະ ປະຕິບັດບັນດາຄຳແນະນຳ ຂອງ ເຈົ້າໜ້າທີ່ດ່ານກວດກາສັດຕະວະແພດຊາຍແດນສາກົນ;

**ຂັ້ນຕອນ-11:** ດຳເນີນການຂ້າເຊື້ອພາຫະນະ, ນຳງົວ, ຄວາຍ ຂຶ້ນລົດຢູ່ສະຖານທີ່ຕົ້ນທາງ, ເຄື່ອນຍ້າຍງົວ, ຄວາຍ ມາຍັງດ່ານຊາຍແດນ, ແຈ້ງເອກະສານ ຢູ່ດ່ານຊາຍແດນຕໍ່ເຈົ້າໜ້າທີ່, ກຳກັບດູແລງົວ, ຄວາຍ ໃນລະຫວ່າງທີ່ເຈົ້າໜ້າທີ່ດຳເນີນການກວດກາງົວ, ຄວາຍ ຕົວຈິງ, ປະສານສົມທົບກັບພະນັກງານສັດຕະວະແພດຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ຫຼື ພະນັກງານຂອງຂະແໜງລ້ຽງສັດ ແລະ ການປະມົງ ຂັ້ນແຂວງ ຂອງສະຖານທີ່ປາຍທາງ ໃນການກວດກາ, ຕິດຕາມ ຫຼັງການນຳເຂົ້າໃນເວລາລົດບັນທຸກມາເຖິງ ລວມທັງການກັກກັນງົວ, ຄວາຍກ່ອນນຳເຂົ້າຝູງ ຫຼື ກ່ອນນຳເຂົ້າຂ້າ;

**ຂັ້ນຕອນ-12:** ເປັນເຈົ້າການ ປະສານສົມທົບກັບໜ່ວຍງານລ້ຽງສັດ ແລະ ການປະມົງ ຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ຂະແໜງລ້ຽງສັດ ແລະ ການປະມົງ ຂັ້ນແຂວງ ເພື່ອເຝົ້າລະວັງ ແລະ ຕິດຕາມກວດກາສຸຂະພາບສັດ ຕາມຫຼັກການດ້ານວິຊາການ, ຖ້າຫາກ ສັງເກດເຫັນ ງົວ, ຄວາຍ ໃດໜຶ່ງເຈັບປ່ວຍ ຫຼື ຕາຍ ໃນຊ່ວງເວລາໃດໜຶ່ງຂອງການຂົນສົ່ງ, ການກັກກັນ ຫຼື ຢູ່ໃນໄລຍະລ້ຽງ ກໍໃຫ້ແຈ້ງຫາໜ່ວຍງານລ້ຽງສັດ ແລະ ການປະມົງ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ແລະ ຂະແໜງລ້ຽງສັດ ແລະ ການປະມົງ ຂັ້ນແຂວງ ໂດຍດ່ວນ ພ້ອມທັງໃຫ້ຄວາມຮ່ວມມື ກັບອົງການທີ່ກ່ຽວຂ້ອງຂອງລັດ ໃນກໍລະນີທີ່ຕ້ອງໄດ້ປະຕິບັດມາດຕະການດ້ານວິຊາການ.

## 6. ຂັ້ນຕອນການປະຕິບັດງານກ່ຽວກັບການອອກໃບອະນຸມັດນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ

**ຂັ້ນຕອນ-1:** ເມື່ອຜູ້ຄ້າສັດ ນຳຄຳຮ້ອງ ແລະ ເອກະສານມາຍື່ນຜ່ານ ຂາເຂົ້າ-ຂາອອກ ຂອງກົມລ້ຽງສັດ ແລະ ການປະມົງ ແລ້ວໃຫ້ພະນັກງານ ຂາເຂົ້າ-ຂາອອກ ກວດກາຄວາມຄົບຖ້ວນຂອງເອກະສານ ທີ່ລະບຸໄວ້ ຂັ້ນຕອນທີ່ 5 ຂອງຂໍ້ 5 ຂອງມາດຕະຖານສະບັບນີ້;

**ຂັ້ນຕອນ-2:** ຫາກພົບເອກະສານບໍ່ຄົບຖ້ວນ ໃຫ້ພະນັກງານ ຂາເຂົ້າ-ຂາອອກ ແນະນຳຜູ້ປະກອບການປັບປຸງ ແລະ ປະກອບໃຫ້ຖືກຕ້ອງ. ຖ້າຫາກເອກະສານຄົບຖ້ວນແລ້ວ ໃຫ້ສົ່ງຫາພະແນກສັດຕະວະແພດ ຄົ້ນຄ້ວາ, ໃນກໍລະນີເປັນແນວພັນ ແລະ ໃຫ້ພະແນກລ້ຽງສັດ ຄົ້ນຄ້ວາປະກອບຄຳເຫັນເພີ່ມ;

**ຂັ້ນຕອນ-3:** ພາຍຫຼັງທີ່ພະແນກສັດຕະວະແພດໄດ້ຮັບເອກະສານແລ້ວໃຫ້ປະຕິບັດດັ່ງນີ້:

1) ດຳເນີນການກວດກາເອກະສານ ເປັນຕົ້ນ:

(1) ແຜນການນໍາເຂົ້າ, ສົ່ງອອກ ຫຼື ສົ່ງຜ່ານ ງົວ, ຄວາຍ ປະຈໍາປີ ທີ່ອອກໃຫ້ ໂດຍ ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ, ກວດກາການຈັດຕັ້ງປະຕິບັດແຜນທີ່ຜ່ານມາ ແລະ ຄວາມເໝາະສົມຂອງການນໍາເຂົ້າໃນຄັ້ງນີ້.

(2) ກວດກາສໍາເນົາໜັງສືເດີນທາງຍັງນໍາໃຊ້ໄດ້ ຫຼື ບໍ່.

(3) ໃບທະບຽນວິສາຫະກິດ ຍັງມີອາຍຸການນໍາໃຊ້ໄດ້ ຫຼື ບໍ່.

(4) ໃບມອບສິດຖືກຕ້ອງ ຫຼື ບໍ່ ໃນກໍລະນີ ໃຫ້ຜູ້ຕາງໜ້າຂອງຜູ້ຄ້າສັດມາແລ່ນເອກະສານແທນ.

(5) ກວດກາການອະນຸຍາດດໍາເນີນທຸລະກິດຖືກຕ້ອງ ສົມບູນ ຫຼື ບໍ່.

(6) ຮຽກເອົາ ແລະ ກວດກາເອກະສານທີ່ຈໍາເປັນອື່ນ ຕາມແຕ່ລະກໍລະນີ.

2) ກວດກາ ແລະ ປະເມີນຄວາມສ່ຽງ ຕາມຂໍ້ມູນດັ່ງນີ້:

(1) ກວດສະຖານະພາບຂອງພະຍາດສັດທີ່ຈໍາເປັນຕ້ອງແຈ້ງ ຢູ່ໃນເວັບໄຊຂອງອົງການສຸຂະພາບສັດສາກົນ ກ່ຽວກັບການເກີດການລະບາດຂອງພະຍາດທີ່ກ່ຽວຂ້ອງ.

(2) ເປັນປະເທດທີ່ປອດພະຍາດ Rinderpest, Contagious Bovine Pleuropneumonia (CBPP), East Coast Fever, Rift Valley Fever, Bovine Spongiform Encephalopathy (BSE) ແລະ Q Fever.

(3) ບໍ່ມີການລາຍງານການເກີດພະຍາດ Foot and Mouth Disease (FMD) ຢ່າງໜ້ອຍ 12 ເດືອນ ກ່ອນການສົ່ງອອກ ໂດຍມີ ຫຼື ບໍ່ມີ ການສັກຢາກັນພະຍາດ FMD.

(4) ມາຈາກເຂດທີ່ບໍ່ພົບການເກີດພະຍາດ Bovine Malignant Catarrhal Fever, Johne's Diseases, Bovine Ephemeral Fever, Vesicular Stomatitis, Bluetongue (BT), Anaplasmosis, Babesiosis, Theileriosis ແລະ Trypanosomiasis ພາຍໃນ 12 ເດືອນ ກ່ອນການສົ່ງອອກ.

(5) ພາຍໃນ 12 ເດືອນ ກ່ອນການສົ່ງອອກ ງົວ, ຄວາຍ ທີ່ຢູ່ໃນຟາມທີ່ເປັນແຫຼ່ງກໍາເນີດສິນຄ້າ ຕ້ອງບໍ່ມີອາການຂອງພະຍາດ Anthrax, Tuberculosis, Brucellosis, Leptospirosis, Johne's Disease, Infectious Bovine Rhinotracheitis/Infectious Pustular Vulvovaginitis (IBR/IPV), Bovine Viral Diarrhoea/Mucosal Disease (BVD/MD), Mycoplasmosis, Vesicular Stomatitis, Bluetongue, Enzootic Bovine Leukosis, Campylobacteriosis ແລະ Trichomonosis.

(6) ງົວ, ຄວາຍ ທຸກໂຕ ທີ່ຈະນໍາເຂົ້າ ສປປ ລາວ ຕ້ອງໄດ້ກັກກັນ ເພື່ອຕິດຕາມສຸຂະພາບຢູ່ໃນສະຖານທີ່ ທີ່ອົງການສັດຕະວະແພດຂອງປະເທດສົ່ງອອກຮັບຮອງ ແລະ ຢູ່ພາຍໃຕ້ການຕິດຕາມຂອງພະນັກງານສັດຕະວະແພດ ຂອງປະເທດສົ່ງອອກ ພາຍໃນ 30 ວັນ ແລະ ຕ້ອງໄດ້ເກັບຕົວຢ່າງເພື່ອນໍາໄປວິໄຈຕາມວິທີການທີ່ອົງການສຸຂະພາບສັດສາກົນແນະນໍາ ແລະ ຕ້ອງມີຜົນເປັນລົບ ສໍາລັບພະຍາດ Tuberculosis, Brucellosis, Bluetongue, Enzootic Bovine Leukosis, Infectious Bovine Rhinotracheitis/Infectious Pustular Vulvovaginitis, Johne's Disease, Leptospirosis, Campylobacteriosis, Trichomonosis infection, Babcsiosis, Trypanosomiasis, Anaplasmosis ແລະ Theileriasis.

(7) ສັດຕ້ອງຮັບການຢັ້ງຢືນວ່າໄດ້ຂ້າແມ່ກາຝາກດ້ວຍຢາທີ່ມີປະສິດທິພາບກ່ອນການສົ່ງອອກ.

3) ກວດກາ ດ່ານທີ່ຈະນຳເຂົ້າ, ສົ່ງອອກ ຫຼື ຈຸດໝາຍປາຍທາງສຸດທ້າຍບ່ອນສິນຄ້າຈະໄປເຖິງ.

4) ກວດກາຄວາມສາມາດຂອງຟາມທີ່ຈະລ້ຽງງົວ, ຄວາຍທີ່ຈະນຳເຂົ້າ.

5) ພິຈາລະນາຈຳນວນ ງົວ, ຄວາຍ ທີ່ຈະອະນຸຍາດໃຫ້ນຳເຂົ້າ ໂດຍອີງໃສ່ຄວາມສາມາດຂອງຜູ້ຄ້າສັດ, ຂະໜາດຂອງຟາມ ແລະ ພື້ນທີ່ກັກກັນ (ຖ້ານຳເຂົ້າມາເພື່ອລ້ຽງ/ປັບປຸງພັນ), ຄວາມສາມາດຂອງໂຮງຂ້າສັດ ແລະ ພື້ນທີ່ກັກກັນຊົ່ວຄາວ (ຖ້ານຳເຂົ້າມາເພື່ອຂ້າ) ແລະ ຄວາມສາມາດຂອງຜູ້ສົ່ງອອກD

**ຂັ້ນຕອນ-4:** ການພິຈາລະນາຄຳຮ້ອງຂໍອະນຸມັດຂອງຜູ້ຄ້າສັດ;

1) ພະແນກສັດຕະວະແພດ ສະເໜີປະຕິເສດການອະນຸຍາດນຳເຂົ້າ ຖ້າຫາກວ່າໄດ້ປະເມີນແລ້ວ ເຫັນວ່າ ແຫຼ່ງກຳເນີດຂອງງົວ, ຄວາຍ ມີຄວາມສ່ຽງທີ່ຈະນຳເອົາພະຍາດ ຫຼື ສິ່ງທີ່ເປັນອັນຕະລາຍເຂົ້າມາສູ່ ສປປ ລາວ.

2) ໃນກໍລະນີໄດ້ປະເມີນແລ້ວ ເຫັນວ່າມີຄວາມປອດໄພ, ພະແນກສັດຕະວະແພດ ຮ່າງໃບອະນຸມັດຕາມຮ່າງແບບພິມ ຂອພ-5 ແລ້ວ ນຳສະເໜີຫາຫົວໜ້າກົມລ້ຽງສັດ ແລະ ການປະມົງ ລົງລາຍເຊັນ.

**ຂັ້ນຕອນ-5:** ການສົ່ງມອບໃບອະນຸມັດ ໃຫ້ປະຕິບັດ ດັ່ງນີ້:

1) ພາຍຫຼັງທີ່ຜູ້ຄ້າສັດ ຈ່າຍຄ່າທຳນຽມ ແລະ ຄ່າບໍລິການແລ້ວ ໃຫ້ມອບຊຸດຕົ້ນສະບັບ ໃຫ້ຜູ້ຄ້າສັດ.

2) ສົ່ງສຳເນົາໜຶ່ງສະບັບ ໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ ທີ່ກ່ຽວຂ້ອງ (ສົ່ງທາງອີເມວ / WhatsApp).

3) ສົ່ງສຳເນົາໜຶ່ງສະບັບ ໃຫ້ຫົວໜ້າດ່ານກວດກາສັດຕະວະແພດຊາຍແດນສາກົນ/ທ້ອງຖິ່ນທີ່ກ່ຽວຂ້ອງ (ສົ່ງທາງອີເມວ / WhatsApp).

4) ເກັບມ້ຽນ 1 ສະບັບ.

## 7. ຂັ້ນຕອນການປະຕິບັດງານການກວດກາງົວ, ຄວາຍ ຢູ່ດ່ານກວດກາສັດຕະວະແພດສາກົນ

**ຂັ້ນຕອນ-1:** ເມື່ອເຈົ້າໜ້າທີ່ ດ່ານກວດກາສັດຕະວະແພດສາກົນ ໄດ້ຮັບເອກະສານທີ່ຜູ້ຄ້າສັດມາແຈ້ງກ່ອນລ່ວງໜ້າ 3 ວັນ ແລ້ວດຳເນີນການກວດກາຄວາມຖືກຕ້ອງຂອງເອກະສານທັນທີ ແລະ ປະເມີນ ຄວາມສ່ຽງຂັ້ນຕົ້ນ. ຖ້າມີຂໍ້ສົງໄສ ຄວນປະສານສົມທົບກັບເຈົ້າໜ້າທີ່ສັດຕະວະແພດຂອງລັດ ຂອງປະເທດສົ່ງອອກ ຫຼື ນຳເຂົ້າ ເພື່ອກວດພິສູດຄວາມຖືກຕ້ອງຂອງຂໍ້ມູນ ແລະ ເອກະສານດັ່ງກ່າວ;

**ຂັ້ນຕອນ-2:** ກວດແຫຼ່ງທີ່ມາຂອງ ງົວ, ຄວາຍ ທີ່ຈະນຳເຂົ້າມາຜ່ານດ່ານ. ຖ້າຫາກພົບ ແຫຼ່ງທີ່ມາຂອງ ງົວ, ຄວາຍ ແຕກຕ່າງໄປຈາກທີ່ໄດ້ຮັບການອະນຸມັດ, ເຈົ້າໜ້າທີ່ດ່ານກວດກາສັດຕະວະແພດສາກົນ ຕ້ອງແຈ້ງໃຫ້ຜູ້ຄ້າສັດໂຈະການຂົນສົ່ງສິນຄ້າ ເຂົ້າມາດ່ານຊາຍແດນ ແລະ ບໍ່ໃຫ້ອອກໃບຢັ້ງຢືນການກວດກາເອກະສານໃຫ້;

ຂັ້ນຕອນ-3: ໃນມື້ນຳ ງົວ, ຄວາຍ ເຂົ້າມາຕົວຈິງ ເຈົ້າໜ້າທີ່ກວດກາສັດຕະວະແພດ ຕ້ອງກວດກາ ດັ່ງນີ້:

1) ກວດໃບມອບສິດຖືກຕ້ອງ ຫຼື ບໍ່ ໃນກໍລະນີ ໃຫ້ຜູ້ຕາງໜ້າຂອງຜູ້ຄ້າສັດມາແລ່ນເອກະສານແທນ.

2) ກວດໃບອະນຸມັດທີ່ອອກໂດຍກົມລ້ຽງ ແລະ ການປະມົງ.

3) ກວດໃບຢັ້ງຢືນກຳມະພັນສັດ (ໃນກໍລະນີ ນຳເຂົ້າມາເພື່ອເປັນແນວພັນ).

4) ກວດໃບຢັ້ງຢືນແຫຼ່ງທີ່ມາຂອງສັດ.

5) ກວດໃບຢັ້ງຢືນການສັກຢາກັນພະຍາດ ຖືກຕ້ອງ ແລະ ຮັບປະກັນວ່າ ງົວ, ຄວາຍ ຍັງຢູ່ໃນ ໄລຍະທີ່ສາມາດຄຸ້ມກັນພະຍາດໄດ້ ຫຼື ບໍ່.

6) ກວດໃບຢັ້ງຢືນສຸຂະພາບສັດ ຫຼື ໃບຢັ້ງຢືນການກັກກັນ ຖືກຕ້ອງຕາມແບບພິມທີ່ໄດ້ຕົກລົງກັນ ຫຼື ບໍ່, ການຢັ້ງຢືນ ຖືກຕາມເງື່ອນໄຂ ທີ່ ສປປ ລາວ ຮຽກຮ້ອງ ຫຼື ບໍ່.

7) ກວດໃບອະນຸຍາດນໍາເຂົ້າຂອງປະເທດປາຍທາງໃນກໍລະນີສົ່ງອອກ ແລະ ສົ່ງຜ່ານ.

8) ກວດກາໃບສະຫຼຸບການຈັດຕັ້ງປະຕິບັດແຜນການ ນໍາເຂົ້າ ຫຼື ສົ່ງອອກ ຫຼື ສົ່ງຜ່ານ.

9) ກວດເອກະສານຕ່າງໆ ທີ່ກ່ຽວຂ້ອງກັບການແຈ້ງ ແລະ ຂົນສົ່ງສິນຄ້າ.

10) ຮ່ວມກັນກັບເຈົ້າໜ້າທີ່ ພາສີ ດໍາເນີນການກວດຈໍານວນ ແລະ ຄວາມຖືກຕ້ອງຂອງການມີໜ້າຂອງງົວ, ຄວາຍ ທຽບກັບເອກະສານ ແລະ ນໍ້າເບີ້ຫູ ຈາກນັ້ນໃຫ້ ກວດສຸຂະພາບທົ່ວໄປຂອງ ງົວ, ຄວາຍ, ວັດແທກອຸນຫະພູມຮ່າງກາຍຂອງງົວ, ຄວາຍ ດ້ວຍບາຫຼອດອິນຟຣາເຣດ ແລະ ປະເມີນຄວາມພ້ອມຂອງງົວ, ຄວາຍທີ່ຈະເດີນທາງຕໍ່.

11) ຫາກມີຂໍ້ສົງໄສກ່ຽວກັບງົວ, ຄວາຍ ເປັນພະຍາດ ໃຫ້ເຈົ້າໜ້າກວດກາສັດຕະວະແພດ ເກັບຕົວຢ່າງເພື່ອນໍາໄປວິໄຈ ຕາມຫຼັກວິຊາການ. ຖ້ານໍາເຂົ້າມາເພື່ອຂ້າບໍລິໂພກ ຄວນສຸ່ມເກັບຕົວຢ່າງ ສົ່ງເຂົ້າຫ້ອງວິໄຈ ເພື່ອຊອກຫາ ພະຍາດ ຫຼື ສານຕົກຄ້າງ ທີ່ຈະມີຜົນກະທົບຕໍ່ສຸຂະພາບຂອງຜູ້ບໍລິໂພກ.

ຂັ້ນຕອນ-5: ດໍາເນີນການຂ້າເຊື້ອລົດບັນທຸກ ໂດຍໃຫ້ສີດພົ່ນຢາຂ້າເຊື້ອອ້ອມຮອບລົດບັນທຸກ ເພາະການສີດພົ່ນພຽງແຕ່ລໍ້ລົດບັນທຸກ ແມ່ນບໍ່ພຽງພໍໃນການຂ້າເຊື້ອ ດ້ວຍເຄື່ອງສີດພົ່ນທີ່ຕິດຕັ້ງ ຢູ່ດ່ານກວດກາຊາຍແດນ ກ່ອນຈະອະນຸຍາດໃຫ້ງົວ, ຄວາຍ ເຄື່ອນຍ້າຍອອກຈາກບໍລິເວນກວດກາຂອງດ່ານ;

ຂັ້ນຕອນ-6: ເມື່ອຜ່ານການກວດກາສັດຢູ່ດ່ານຢ່າງຖືກຕ້ອງສົມບູນແລ້ວ ໃຫ້ເຈົ້າໜ້າທີ່ສັດຕະວະແພດອອກໃບຢັ້ງຢືນການກວດກາ ຕາມແບບພິມ ຂອຜ-7 ໃຫ້ຜູ້ຄ້າສັດ ເພື່ອເປັນເອກະສານບ່ອນອີງໃຫ້ແກ່ພາກສ່ວນພາສີ ແລະ ນໍາໃຊ້ ຕິດຕາມໄປນໍາການຂົນສົ່ງ;

ຂັ້ນຕອນ-7: ເຈົ້າໜ້າທີ່ດ່ານກວດກາສັດຕະວະແພດສາກົນ ບັນທຶກຂໍ້ມູນລົງໃນປື້ມບັນຊີສັດນໍາເຂົ້າຜ່ານດ່ານ ໂດຍໃຫ້ມີການຕິດຕາມຕົວເລກ ແຜນນໍາເຂົ້າລວມ, ການຫັກລົບຈໍານວນທີ່ນໍາເຂົ້າແລ້ວ ແລະ ຈໍານວນທີ່ຍັງເຫຼືອ;

ຂັ້ນຕອນ-8: ຫຼັງຈາກ ກວດປ່ອຍສິນຄ້າແລ້ວ, ງົວ, ຄວາຍ ຄວນຂົນຍ້າຍອອກສະຖານທີ່ລານຈອດລົດຂົນສົ່ງ ແລະ ຕ້ອງເດີນທາງໄປຕາມເສັ້ນທາງທີ່ກໍານົດ ຈົນຮອດຈຸດໝາຍປາຍທາງສຸດທ້າຍ;

ຂັ້ນຕອນ-9: ເມື່ອປ່ອຍງົວ, ຄວາຍ ອອກຈາກດ່ານແລ້ວ ໃຫ້ເຈົ້າໜ້າທີ່ດ່ານກວດກາສັດຕະວະແພດຊາຍແດນສາກົນດ່ານນໍາເຂົ້າ ແຈ້ງໃຫ້ໜ່ວຍງານລ້ຽງສັດ ແລະ ການປະມົງ ຂອງຫ້ອງການກະສິກໍາ ແລະ ປ່າໄມ້ ຂັ້ນເມືອງ ແລະ ຂະແໜງລ້ຽງສັດ ແລະ ການປະມົງ ຂັ້ນແຂວງທີ່ກ່ຽວຂ້ອງ ກ່ຽວກັບຈຸດໝາຍປາຍທາງສຸດທ້າຍທີ່ສັດລ້ຽງຈະໄປເຖິງ ຊາບ ພ້ອມທັງແຈ້ງລາຍລະອຽດກ່ຽວກັບ: ຊື່ ແລະ ເບີໂທລະສັບຂອງຜູ້ຄ້າສັດ, ຊື່ ແລະ ເບີໂທລະສັບຂອງຄົນຂັບລົດ ແລະ ອື່ນໆ ເພື່ອຕິດຕາມການຂົນສົ່ງສິນຄ້າ ບໍ່ໃຫ້ເກີດຄວາມສ່ຽງຫຼັງການເຂົ້າ.

**ແຜນກຽມຄວາມພ້ອມສຸກເສີນ ໃນກໍລະນີ ເກີດບັນຫາໃດໜຶ່ງເຊັ່ນ:**

**1) ໃນກໍລະນີ ທີ່ງົວ, ຄວາຍມາຮອດດ່ານຊາຍແດນ ບໍ່ມີໃບອະນຸມັດນໍາເຂົ້າທີ່ຖືກຕ້ອງ:**

ງົວ, ຄວາຍ ທີ່ບໍ່ມີໃບອະນຸມັດນໍາເຂົ້າທີ່ຖືກຕ້ອງ ຈະຕ້ອງຖືກສົ່ງກັບຄືນຫາປະເທດສົ່ງອອກ ໂດຍຜູ້ຄ້າສັດຕ້ອງເປັນຜູ້ຮັບຜິດຊອບຕໍ່ຄ່າເສຍຫາຍທັງໝົດ.

**2) ໃນກໍລະນີ ທີ່ງົວ, ຄວາຍ ມາຮອດດ່ານຊາຍແດນ ບໍ່ມີເອກະສານຄັດຕິດ ທີ່ສອດຄ່ອງກັບເງື່ອນໄຂນໍາເຂົ້າຂອງ ສປປ ລາວ:**

ງົວ, ຄວາຍ ທີ່ບໍ່ມີໃບຢັ້ງຢືນສຸຂະພາບສັດທີ່ຖືກຕ້ອງ, ບໍ່ມີໃບຢັ້ງຢືນການສັກຢາກັນພະຍາດ, ໃບຢັ້ງຢືນການກັກກັນ ແລະ ເອກະສານທີ່ຈຳເປັນຕາມການແຈ້ງການທີ່ປະກາດໄວ້ ຢູ່ດ່ານກວດກາຊາຍແດນ. ສັດດັ່ງກ່າວ ຈະຕ້ອງໄດ້ສົ່ງກັບຄືນຫາປະເທດສົ່ງອອກ.

3) **ໃນກໍລະນີ ທີ່ລົດບັນທຸກມາຮອດດ່ານກວດກາຊາຍແດນຂາເຂົ້າບໍ່ໄດ້ປິດສະໜິດ ຫຼື ບໍ່ໄດ້ໜີບກົ່ວ:**
ເຈົ້າໜ້າທີ່ດ່ານກວດກາຊາຍແດນ ຕ້ອງແຈ້ງໃຫ້ຂະແໜງລ້ຽງສັດ ແລະ ການປະມົງຂັ້ນແຂວງ ຊາບ ໂດຍດ່ວນ ແລະ ຈະຕ້ອງໄດ້ກວດກາ ເລກລະຫັດຂອງສັດ ຫຼື ກຸ່ມສັດ ຕາມເລກ ຫຼື ລະຫັດຂອງສັດທີ່ຊີ້ບອກຢູ່ໃນບັນຊີລາຍການສິນຄ້າ ທີ່ມາພ້ອມກັບການຂົນສົ່ງ ແລະ ຜູ້ຄ້າສັດຈະໄດ້ຮັບການແຈ້ງເຕືອນຢ່າງເປັນລາຍລັກອັກສອນ.

4) **ໃນກໍລະນີທີ່ພົບງົວ, ຄວາຍ ບໍ່ມີເປີ້ ຫຼື ມີນໍ້າເປີ້ລະບຸຕົວຕົນງົວ, ຄວາຍ ແຕກຕ່າງກັບເປີ້ທີ່ລະບຸໄວ້ໃນເອກະສານນໍາເຂົ້າ:**
ເຈົ້າໜ້າທີ່ກວດກາສັດຕະວະແພດ ປະຈຳດ່ານ ຕ້ອງແຈ້ງໃຫ້ຜູ້ນໍາເຂົ້າຊາບ ເພື່ອສົ່ງງົວ, ຄວາຍ ທີ່ມີນໍ້າເປີ້ແຕກຕ່າງນັ້ນສົ່ງກັບຄືນ ຫຼື ອາດຖືກຍົກເລີກການຂົນສົ່ງທັງຄັນລົດ ແລະ ມີການເຮັດບົດບັນທຶກຢ່າງເປັນລາຍລັກອັກສອນ.

5) **ໃນກໍລະນີ ທີ່ງົວ, ຄວາຍ ນໍາເຂົ້າ ເພື່ອຂ້າໂດຍກົງ ໄດ້ຕາຍໃນເວລາທີ່ສັດມາຮອດ:**
ເຈົ້າໜ້າທີ່ສັດຕະວະແພດທີ່ມີອໍານາດຂັ້ນແຂວງ ຕ້ອງໄດ້ເຮັດບົດບັນທຶກການຕາຍ. ຊາກສັດ ຄວນໄດ້ຮັບການກໍາຈັດ ຕາມເງື່ອນໄຂ ແລະ ກົດໝາຍທີ່ກ່ຽວຂ້ອງ.

6) **ໃນກໍລະນີທີ່ ງົວ, ຄວາຍ ມາຮອດສະແດງອາການຜິດປົກກະຕິ:**
ງົວ, ຄວາຍ ທີ່ສະແດງອາການຜິດປົກກະຕິ ຕ້ອງຖືກແຍກປ່ຽວ, ກວດກາສຸຂະພາບ ຫຼື ປິ່ນປົວ ໂດຍເຈົ້າໜ້າທີ່ສັດຕະວະແພດຂັ້ນແຂວງ ທີ່ມີອໍານາດໃນການຕັດສິນໃຈ ແລະ ໃຫ້ມີບົດລາຍງານການເຝົ້າລະວັງ ແລະ ການປິ່ນປົວ ຢ່າງເປັນລາຍລັກອັກສອນ.

**8. ຂັ້ນຕອນການປະຕິບັດງານການຄຸ້ມຄອງຄວາມສ່ຽງຫຼັງການນໍາເຂົ້າງົວ, ຄວາຍ ມີຊີວິດ**

**8.1. ສໍາລັບ ງົວ, ຄວາຍ ມີຊີວິດ ນໍາເຂົ້າມາເພື່ອລ້ຽງເປັນແນວພັນ**

**ຂັ້ນຕອນ-1:** ເຈົ້າໜ້າທີ່ດ່ານກວດກາສັດຕະວະແພດຊາຍແດນສາກົນ ແຈ້ງໃຫ້ໜ່ວຍງານລ້ຽງສັດ ແລະ ການປະມົງ ຂັ້ນເມືອງ ແລະ ຂະແໜງລ້ຽງສັດ ແລະ ການປະມົງຂັ້ນແຂວງ ທີ່ກ່ຽວຂ້ອງ ຊາບກ່ຽວກັບການມາຮອດຂອງ ງົວ, ຄວາຍ ພ້ອມລາຍລະອຽດ ຈາກນັ້ນ ໃຫ້ພະນັກງານສັດຕະວະແພດຂັ້ນເມືອງປາຍທາງ ຕິດຕາມການເຄື່ອນຍ້າຍງົວ, ຄວາຍ ແລະ ຄຸ້ມຄອງຄວາມສ່ຽງ;

**ຂັ້ນຕອນ-2:** ຜູ້ຄ້າສັດຕ້ອງປະສານຫາ ສັດຕະວະແພດຂັ້ນເມືອງ ຫຼື ຂັ້ນແຂວງ ກ່ອນຈະຂົນຍ້າຍສັດໄປຟາມຂອງຕົນ;

ຂັ້ນຕອນ-3: ພະນັກງານສັດຕະວະແພດ ຂັ້ນເມືອງ ຫຼື ຂັ້ນແຂວງ ໄປສະຖານທີ່ພ້ອມກັບຜູ້ຄ້າສັດ ກວດກາເອກະສານ ແລະ ກວດກາສັດລ້ຽງ ຕາມເອກະສານ;

ຂັ້ນຕອນ-4: ກວດກາສະຖານທີ່ກັກກັນ, ກວດກາການຂ້າເຊື້ອພະຍາດ ແລະ ແມ່ກາຝາກ ໃນພື້ນທີ່ກັກກັນ ຖ້າຫາກ ບໍ່ມີບັນຫາ ຈຶ່ງອະນຸຍາດໃຫ້ເອົາງົວ, ຄວາຍ ລົງຈາກພາຫະນະ ແລະ ປ່ອຍເຂົ້າຟາມກັກກັນ ແລະ ແນະນໍາ ໃຫ້ຜູ້ຄ້າສັດລ້ຽງໄວ້ ໃນສະຖານທີ່ກັກກັນ ເປັນເວລາ 30 ວັນ;

ຂັ້ນຕອນ-5: ພະນັກງານສັດຕະວະແພດຂັ້ນເມືອງ ເກັບຕົວຢ່າງເລືອດ ຢ່າງໜ້ອຍ 10% ຈາກສັດລ້ຽງ ເພື່ອວິໄຈຫາພະຍາດ. ການເກັບຕົວຢ່າງ ແລະ ສົ່ງຕົວຢ່າງເລືອດໄປວິໄຈ ຄວນເຮັດໃຫ້ສໍາເລັດໃນມື້ດຽວກັນກັບການມາ

ຮອດຂອງ ງົວ, ຄວາຍ (ພາຍໃນ 24 ຊົ່ວໂມງ) ແລະ ແນະນຳໃຫ້ເຈົ້າຂອງສັດ ຕິດຕາມ, ກວດກາ ສຸຂະພາບ ສັດ ແລະ ບັນທຶກສະພາບຂອງສັດໃນແຕ່ລະມື້. ຜູ້ຄ້າສັດ ຈະເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍໃນການກວດ ຕົວຢ່າງເລືອດ ແລະ ການກວດອື່ນໆ;

ຂັ້ນຕອນ-6: ພະນັກງານສັດຕະວະແພດຂັ້ນເມືອງ ຫຼື ຂັ້ນແຂວງ ຈະລົງໄປຕິດຕາມກວດກາຟາມ ແລະ ກວດສຸຂະພາບຂອງ ງົວ, ຄວາຍ ໃນໄລຍະກັກກັນ ຢ່າງໜ້ອຍ 1 ຄັ້ງຕໍ່ອາທິດ ແລະ ເຮັດບົດລາຍງານການກວດກາ ໃຫ້ຂະແໜງລ້ຽງ ສັດ ແລະ ການປະມົງຂັ້ນແຂວງ ຊາບ ຢ່າງເປັນປົກກະຕິ;

ຂັ້ນຕອນ-7: ຖ້າພະນັກງານສັດຕະວະແພດຂັ້ນເມືອງ ສັງເກດເຫັນພະຍາດໃດໜຶ່ງເກີດຂຶ້ນໃນ ງົວ, ຄວາຍ ບາງໂຕ ຕ້ອງ ປະຕິບັດ ດັ່ງນີ້:

1) ແນະນຳໃຫ້ເຈົ້າຂອງສັດ ແຍກປ່ຽວສັດລ້ຽງ ໂຕທີ່ເຈັບອອກ ເພື່ອປິ່ນປົວ ແລະ ກຳຈັດສັດລ້ຽງທີ່ຕາຍ ຕາມ ວິທີການທີ່ສັດຕະວະແພດແນະນຳ.
2) ເກັບຕົວຢ່າງເລືອດ ຈາກສັດລ້ຽງທຸກໂຕ ແລະ ສົ່ງໄປວິໄຈ ຢູ່ສູນວິໄຈພະຍາດສັດ.
3) ລາຍງານດ່ວນ ໃຫ້ຂະແໜງລ້ຽງສັດ ແລະ ການປະມົງຂັ້ນແຂວງ ແລະ ພະແນກສັດຕະວະແພດ ກົມລ້ຽງສັດ ແລະ ການປະມົງ ຊາບ ແລະ ໃຫ້ດຳເນີນມາດຕະການໂຕ້ຕອບທີ່ຈຳເປັນ.
4) ໂດຍອີງຕາມຜົນຂອງການວິໄຈ, ຖ້າພົບວ່າ ມີພະຍາດໃດໜຶ່ງ, ຊຶ່ງສາມາດປິ່ນປົວໄດ້ ຫຼື ສາມາດຄວບຄຸມ ໂດຍການໃຫ້ວັກຊີນ, ຄວນໃຫ້ວັກຊີນງົວ, ຄວາຍ ທຸກໂຕໃນສະຖານທີ່ກັກກັນ ແລະ ຕິດຕາມ, ກວດກາ ສຸຂະພາບເປັນປົກກະຕິ. ຖ້າສັງເກດເຫັນວ່າ ພະຍາດທີ່ເກີດຂຶ້ນນັ້ນ ມີຄວາມຮ້າຍແຮງຫຼາຍ ໃຫ້ດຳເນີນການຄວບຄຸມຕາມມາດຕະການດ້ານວິຊາການ ແລະ ແຈ້ງໃຫ້ກົມລ້ຽງສັດ ແລະ ການປະມົງ ຊາບ ເພື່ອພ້ອມກັນແກ້ໄຂ ແລະ ແຈ້ງໃຫ້ປະເທດສົ່ງອອກຊາບ.

ຂັ້ນຕອນ-8: ໃນໄລຍະເວລາ 30 ວັນ ຂອງການກັກກັນ, ຖ້າວ່າ ບໍ່ມີພະຍາດເກີດຂຶ້ນ, ໃຫ້ສິ້ນສຸດການກັກກັນ ແລະ ອະນຸຍາດໃຫ້ເຈົ້າຂອງຟາມ ເອົາງົວ, ຄວາຍ ເຂົ້າຝູງ ເພື່ອເລີ່ມຕົ້ນລ້ຽງຢ່າງປົກກະຕິ.

### 8.2. ສຳລັບ ງົວ, ຄວາຍມີຊີວິດ ເພື່ອນຳມາຂ້າ

ຂັ້ນຕອນ-1: ຜູ້ຄ້າສັດຕ້ອງສ້າງສະຖານທີ່ທ້ອນໂຮມ ຫຼື ບ່ອນພັກສັດເພື່ອກຽມສົ່ງເຂົ້າບ່ອນກວດກາສັດກ່ອນຂ້າ ຕາມ ມາດຕະຖານທີ່ອີງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ກຳນົດ;

ຂັ້ນຕອນ-2: ເຈົ້າໜ້າທີ່ດ່ານກວດກາສັດຕະວະແພດຊາຍແດນສາກົນ ແຈ້ງໃຫ້ໜ່ວຍງານລ້ຽງສັດ ແລະ ການປະມົງ ຂັ້ນ ເມືອງ ແລະ ຂະແໜງລ້ຽງສັດ ແລະ ການປະມົງຂັ້ນແຂວງ ທີ່ກ່ຽວຂ້ອງ ຊາບກ່ຽວກັບການມາຮອດຂອງ ງົວ, ຄວາຍ ພ້ອມລາຍລະອຽດ ຈາກນັ້ນ ໃຫ້ພະນັກງານສັດຕະວະແພດຂັ້ນເມືອງປາຍທາງຕິດຕາມການເຄື່ອນຍ້າຍ ງົວ, ຄວາຍ ແລະ ຄຸ້ມຄອງຄວາມສ່ຽງ;

ຂັ້ນຕອນ-3: ພະນັກງານສັດຕະວະແພດຂັ້ນເມືອງ ຫຼື ຂັ້ນແຂວງ ປະສານຫາຜູ້ຄ້າສັດ ກ່ອນຈະຂົນຍ້າຍງົວ, ຄວາຍ ໄປ ສະຖານທີ່ທ້ອນໂຮມສັດຂອງຕົນ;

ຂັ້ນຕອນ-4. ພະນັກງານສັດຕະວະແພດ ຂັ້ນເມືອງ ຫຼື ຂັ້ນແຂວງ ໄປສະຖານທີ່ພ້ອມກັບຜູ້ຄ້າສັດ ກວດກາເອກະສານ ແລະ ກວດກາສັດລ້ຽງ ຕາມເອກະສານ;

ຂັ້ນຕອນ-5: ກວດກາມາດຕະຖານສະຖານທີ່ທ້ອນໂຮມສັດ, ກວດກາການຂ້າເຊື້ອພະຍາດ ແລະ ແມ່ກາຝາກ ໃນພື້ນທີ່ກັກກັນ ທ້ອນໂຮມສັດ, ຖ້າຫາກ ບໍ່ມີບັນຫາຫຍັງ ຈຶ່ງອະນຸຍາດໃຫ້ເອົາງົວ, ຄວາຍລົງຈາກພາຫະນະ ແລະ ປ່ອຍເຂົ້າສະຖານທີ່ທ້ອນໂຮມສັດ ແລະ ແນະນຳ ໃຫ້ຜູ້ຄ້າສັດ ດູແລງົວ, ຄວາຍ ໃຫ້ຖືກຕ້ອງຕາມຫຼັກວິຊາການ;

ຂັ້ນຕອນ-6: ພະນັກງານສັດຕະວະແພດຂັ້ນເມືອງ ເກັບຕົວຢ່າງເລືອດ ຢ່າງໜ້ອຍ 10% ຈາກສັດລ້ຽງ ເພື່ອວິໄຈຊອກຫາສານຕົກຄ້າງ. ການເກັບ ແລະ ສົ່ງຕົວຢ່າງເລືອດໄປວິໄຈ ຄວນເຮັດໃຫ້ສຳເລັດໃນມື້ດຽວກັນກັບການມາຮອດຂອງ ງົວ, ຄວາຍ (ພາຍໃນ 24 ຊົ່ວໂມງ) ແລະ ແນະນຳໃຫ້ເຈົ້າຂອງສັດ ຕິດຕາມ, ກວດກາ ສຸຂະພາບສັດ ແລະ ບັນທຶກສະພາບຂອງສັດໃນແຕ່ລະມື້. ຜູ້ຄ້າສັດ ຈະເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍໃນການກວດຕົວຢ່າງເລືອດ ແລະ ການກວດກາອື່ນໆ;

ຂັ້ນຕອນ-7: ພະນັກງານສັດຕະວະແພດຂັ້ນເມືອງ ຫຼື ຂັ້ນແຂວງ ມອບໃຫ້ ພະນັກງານກວດກາອະນາໄມຊີ້ນ ເປັນຜູ້ປະສານ ແລະ ຕິດຕາມສຸຂະພາບສັດຮ່ວມກັບຜູ້ຄ້າສັດຢ່າງເປັນປົກກະຕິ;

ຂັ້ນຕອນ-8: ຖ້າພະນັກງານສັດຕະວະແພດຂັ້ນເມືອງ ຫຼື ພະນັກງານກວດກາອະນາໄມຊີ້ນ ສັງເກດເຫັນພະຍາດໃດໜຶ່ງເກີດຂຶ້ນໃນ ງົວ, ຄວາຍ ບາງໂຕ ຕ້ອງປະຕິບັດ ດັ່ງນີ້:

1) ແນະນຳໃຫ້ເຈົ້າຂອງສັດ ແຍກປ່ຽວສັດລ້ຽງ ໂຕທີ່ເຈັບອອກ ເພື່ອປິ່ນປົວ ແລະ ກຳຈັດສັດລ້ຽງທີ່ຕາຍ ຕາມວິທີການທີ່ສັດຕະວະແພດແນະນຳ.
2) ເກັບຕົວຢ່າງເລືອດ ຈາກສັດລ້ຽງທຸກໂຕ ແລະ ສົ່ງໄປວິໄຈ ຢູ່ສູນວິໄຈພະຍາດສັດ.
3) ລາຍງານດ່ວນ ໃຫ້ຂະແໜງລ້ຽງສັດ ແລະ ການປະມົງຂັ້ນແຂວງ ແລະ ພະແນກສັດຕະວະແພດ ກົມລ້ຽງສັດ ແລະ ການປະມົງ ຊາບ ແລະ ໃຫ້ດຳເນີນມາດຕະການໂຕ້ຕອບທີ່ຈຳເປັນ.
4) ໂດຍອີງຕາມຜົນຂອງການວິໄຈ, ຖ້າພົບພະຍາດຮ້າຍແຮງເກີດຂຶ້ນ ໃຫ້ດຳເນີນການຄວບຄຸມຕາມມາດຕະການດ້ານວິຊາການ ແລະ ແຈ້ງໃຫ້ກົມລ້ຽງສັດ ແລະ ການປະມົງ ຊາບ ເພື່ອພ້ອມກັນແກ້ໄຂ ແລະ ແຈ້ງໃຫ້ປະເທດສົ່ງອອກຊາບ.

ຂັ້ນຕອນ-9: ຜ່ານການຕິດຕາມ, ກວດກາ ງົວ, ຄວາຍ ໃນສະຖານທີ່ທ້ອນໂຮມສັດ ຫາກເຫັນວ່າສັດສົມບູນ ແຂງແຮງ ແລະ ເໝາະສົມທີ່ຈະນຳເຂົ້າຂ້າ ໃຫ້ພະນັກງານກວດກາອະນາໄມຊີ້ນ ອະນຸຍາດໃຫ້ເຄື່ອນຍ້າຍງົວ, ຄວາຍເຂົ້າໄປໃນບໍລິເວນໂຮງພັກສັດ ແລະ ດຳເນີນການກວດກາງົວ, ຄວາຍ ໂດຍລະອຽດກ່ອນຂ້າ;

ຂັ້ນຕອນ-10: ເພື່ອຮັບປະກັນຄວາມປອດໄພຂອງຜູ້ບໍລິໂພກ ໃຫ້ພະນັກງານກວດກາອະນາໄມຊີ້ນ ກວດກາຊາກສັດຫຼັງຂ້າທຸກໂຕ. ໃນກໍລະນີສົງໄສ ໃຫ້ສຸ່ມເກັບຕົວຢ່າງຊີ້ນ ສົ່ງໄປວິໄຈຕາມຫຼັກວິຊາການ.

### 8.3. ສຳລັບ ງົວ, ຄວາຍ ມີຊີວິດ ເພື່ອຂົນສົ່ງ ແລະ ນຳອອກໄປປະເທດທີ່ 3

**ຂັ້ນຕອນ-1:** ເມື່ອເຈົ້າໜ້າທີ່ ດ່ານກວດກາສັດຕະວະແພດສາກົນ ໄດ້ຮັບເອກະສານທີ່ຜູ້ຄ້າສັດມາແຈ້ງກ່ອນລ່ວງໜ້າ 3 ວັນ ແລ້ວ ດຳເນີນການກວດກາຄວາມຖືກຕ້ອງຂອງເອກະສານທັນທີ ແລະ ປະເມີນຄວາມສ່ຽງຂັ້ນຕົ້ນ. ຖ້າມີຂໍ້ສົງໄສ ຄວນປະສານສົມທົບກັບເຈົ້າຂອງສັດ ຂອງປະເທດສົ່ງອອກ ຫຼື ນຳເຂົ້າ ເພື່ອກວດພິສູດຄວາມຖືກຕ້ອງຂອງຂໍ້ມູນ ແລະ ເອກະສານດັ່ງກ່າວ;

ຂັ້ນຕອນ-2: ກວດແຫຼ່ງທີ່ມາຂອງ ງົວ, ຄວາຍ ທີ່ຈະນຳເຂົ້າມາຜ່ານດ່ານ. ຖ້າຫາກພົບ ແຫຼ່ງທີ່ມາຂອງ ງົວ, ຄວາຍ ແຕກຕ່າງໄປຈາກທີ່ໄດ້ຮັບການອະນຸມັດ, ເຈົ້າໜ້າທີ່ດ່ານກວດກາສັດຕະວະແພດສາກົນ ຕ້ອງແຈ້ງໃຫ້ຜູ້ຄ້າສັດໂຈະການຂົນສົ່ງສິນຄ້າ ເຂົ້າມາດ່ານຊາຍແດນ ແລະ ບໍ່ໃຫ້ອອກໃບຢັ້ງຢືນການກວດກາເອກະສານໃຫ້;

ຂັ້ນຕອນ-3: ໃນມື້ນຳງົວ, ຄວາຍ ເຂົ້າມາຕົວຈິງ ເຈົ້າໜ້າທີ່ກວດກາສັດຕະວະແພດ ຕ້ອງກວດກາ ດັ່ງນີ້:

1) ກວດໃບມອບສິດຖືກຕ້ອງ ຫຼື ບໍ່ ໃນກໍລະນີ ໃຫ້ຜູ້ຕາງໜ້າຂອງຜູ້ຄ້າສັດມາແລ່ນເອກະສານແທນ.
2) ກວດໃບອະນຸມັດທີ່ອອກໂດຍກົມລ້ຽງ ແລະ ການປະມົງ.
3) ກວດໃບຢັ້ງຢືນແຫຼ່ງທີ່ມາຂອງສັດ.
4) ກວດໃບຢັ້ງຢືນສຸຂະພາບສັດ ຫຼື ໃບຢັ້ງຢືນການກັກກັນ ຖືກຕ້ອງຕາມແບບພິມທີ່ໄດ້ຕົກລົງກັນ ຫຼື ບໍ່, ການຢັ້ງຢືນ ຖືກຕາມເງື່ອນໄຂ ທີ່ ສປປ ລາວຮຽກຮ້ອງ ຫຼື ບໍ່.
5) ກວດໃບອະນຸຍາດຂອງປະເທດປາຍທາງ.
6) ກວດກາໃບສະຫຼຸບການຈັດຕັ້ງປະຕິບັດແຜນການ ນຳເຂົ້າ ຫຼື ສົ່ງອອກ ຫຼື ສົ່ງຜ່ານ.
7) ຮ່ວມກັນກັບເຈົ້າໜ້າທີ່ ພາສີ ດຳເນີນການກວດເອກະສານຂົນສົ່ງທີ່ຈຳເປັນ ແລະ ກວດກາປະທັບ (ໜີບກົ່ວ) ຢູ່ປະຕູທາງອອກຂອງລົດ ເພື່ອບໍ່ໃຫ້ນຳເອົາສັດລ້ຽງລົງຈາກລົດ ແລະ ນຳເອົາສັດໃດໆ ບັນຈຸໃສ່ໃໝ່ ຕະຫຼອດໄລຍະຂອງການຂົນສົ່ງ.

ຂັ້ນຕອນ-4: ດຳເນີນການຂ້າເຊື້ອລົດບັນທຸກ ໂດຍໃຫ້ສີດພົ່ນຢາຂ້າເຊື້ອອ້ອມຮອບລົດບັນທຸກ ເພາະການສີດພົ່ນພຽງແຕ່ລໍ້ລົດບັນທຸກ ແມ່ນບໍ່ພຽງພໍໃນການຂ້າເຊື້ອ ດ້ວຍເຄື່ອງສີດພົ່ນທີ່ຕິດຕັ້ງ ຢູ່ດ່ານກວດກາຊາຍແດນ ກ່ອນຈະອະນຸຍາດໃຫ້ງົວ, ຄວາຍ ເຄື່ອນຍ້າຍອອກຈາກບໍລິເວນກວດກາຂອງດ່ານ;

ຂັ້ນຕອນ-5: ເມື່ອຜ່ານການກວດກາສັດຢູ່ດ່ານຢ່າງຖືກຕ້ອງສົມບູນແລ້ວ ໃຫ້ເຈົ້າໜ້າທີ່ສັດຕະວະແພດອອກໃບຢັ້ງຢືນການກວດກາ ຕາມແບບພິມ ຂອຜ-7 ໃຫ້ຜູ້ຄ້າສັດ ເພື່ອເປັນເອກະສານບ່ອນອີງໃຫ້ແກ່ພາກສ່ວນພາສີ ແລະ ນຳໃຊ້ ຕິດຕາມໄປນຳການຂົນສົ່ງ ພ້ອມທັງແນະນຳຜູ້ຂົນສົ່ງສັດ ປະຕິບັດ ດັ່ງນີ້:

1) ໃຫ້ຂັບລົດບັນທຸກແລ່ນໄປທີ່ດ່ານຊາຍແດນ ຈຸດດ່ານຂາອອກໂດຍກົງ.
2) ບໍ່ຄວນຂົນຍ້າຍສັດລ້ຽງໃດໆ ຫຼື ສິນຄ້າອື່ນ ຂຶ້ນ ລົງ ລົດບັນທຸກ.
3) ບໍ່ໃຫ້ທຳລາຍ ປະທັບກາຂອງລົດ (ໜີບກົ່ວ).
4) ບໍ່ໃຫ້ປ່ຽນລົດບັນທຸກສຳລັບການຂົນສົ່ງລະຫວ່າງທາງໂດຍບໍ່ໄດ້ຮັບອະນຸຍາດ.

ຂັ້ນຕອນ-7: ເຈົ້າໜ້າທີ່ດ່ານກວດກາສັດຕະວະແພດສາກົນ ບັນທຶກຂໍ້ມູນລົງໃນປຶ້ມບັນຊີສັດນຳເຂົ້າຜ່ານດ່ານ ໂດຍໃຫ້ມີການຕິດຕາມຕົວເລກ ແຜນສົ່ງຜ່ານລວມ, ການຫັກລົບຈຳນວນທີ່ນຳຜ່ານແລ້ວ ແລະ ຈຳນວນທີ່ຍັງເຫຼືອ;

ຂັ້ນຕອນ-8: ຫຼັງຈາກ ກວດປ່ອຍສິນຄ້າແລ້ວ, ງົວ, ຄວາຍ ຕ້ອງຖືກຂົນຍ້າຍອອກສະຖານທີ່ລານຈອດລົດຂົນສົ່ງ ແລະ ຕ້ອງເດີນທາງໄປຕາມເສັ້ນທາງທີ່ກຳນົດ ຈົນຮອດຈຸດໝາຍປາຍທາງດ່ານສົ່ງອອກສຸດທ້າຍ;

ຂັ້ນຕອນ-9: ເມື່ອປ່ອຍງົວ, ຄວາຍ ອອກຈາກດ່ານແລ້ວ ໃຫ້ເຈົ້າໜ້າທີ່ດ່ານກວດກາສັດຕະວະແພດຊາຍແດນສາກົນດ່ານນຳເຂົ້າ ແຈ້ງໃຫ້ ຂະແໜງລ້ຽງສັດ ແລະ ການປະມົງຂັ້ນແຂວງ ຂອງດ່ານຂາອອກທີ່ກ່ຽວຂ້ອງ ແລະ ແຈ້ງໃຫ້ດ່ານກວດກາສັດຕະວະແພດຂາອອກອອກຊາບ ພ້ອມທັງແຈ້ງລາຍລະອຽດກ່ຽວກັບ: ປະເພດ ແລະ ຈຳນວນສັດລ້ຽງ, ເສັ້ນທາງຂົນສົ່ງຜ່ານ, ລາຍລະອຽດຂອງໝາຍເລກທະບຽນລົດບັນທຸກ, ຊື່ ແລະ ເບີໂທລະສັບຂອງຄົນຂັບລົດ, ຊື່ ແລະ ເບີໂທລະສັບຂອງຜູ້ຄ້າສັດ ແລະ ຈຸດໝາຍປາຍທາງສຸດທ້າຍບ່ອນສິນຄ້າຈະໄປເຖິງ ແລະ ສົ່ງຂໍ້ມູນດັ່ງກ່າວ ໄປຍັງດ່ານກວດກາສັດຕະວະແພດຊາຍແດນສາກົນຂາອອກ, ຈຸດກວດກາເຈົ້າໜ້າທີ່ຕຳຫຼວດຂອງເມືອງ ແລະ ແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ຂະແໜງລ້ຽງສັດ ແລະ ການປະມົງ ຂັ້ນແຂວງ ຕາມເສັ້ນທາງຜ່ານ ຜ່ານທາງ WhatsApp / Line. ເມື່ອເຈົ້າໜ້າທີ່ດັ່ງກ່າວ ໄດ້ຮັບການແຈ້ງ ຕ້ອງອຳນວຍຄວາມສະດວກໃນການຂົນສົ່ງ ແລະ ບໍ່ແຊກແຊງການເຄື່ອນຍ້າຍຂອງລົດບັນທຸກ ຈົນກວ່າຈະຮອດຈຸດໝາຍປາຍທາງ.

ແຜນການຄວາມພ້ອມສຸກເສີນ ໃນກໍລະນີ ເກີດບັນຫາໃດໜຶ່ງເຊັ່ນ:

1) **ໃນກໍລະນີ ທີ່ງົວ, ຄວາຍ ມາຮອດດ່ານຊາຍແດນ ບໍ່ມີໃບອະນຸມັດ ນຳເຂົ້າທີ່ຖືກຕ້ອງ:**
ງົວ, ຄວາຍ ທີ່ບໍ່ມີໃບອະນຸມັດນຳເຂົ້າທີ່ຖືກຕ້ອງ ຈະຕ້ອງຖືກສົ່ງກັບຄືນຫາປະເທດສົ່ງອອກ ໂດຍຜູ້ຄ້າສັດຕ້ອງເປັນຜູ້ຮັບຜິດຊອບຕໍ່ຄ່າເສຍຫາຍທັງໝົດ.

2) **ໃນກໍລະນີ ທີ່ງົວ, ຄວາຍ ມາຮອດດ່ານຊາຍແດນ ບໍ່ມີເອກະສານຄັດຕິດ ທີ່ສອດຄ່ອງກັບເງື່ອນໄຂການສົ່ງຜ່ານຂອງ ສປປ ລາວ:**
ງົວ, ຄວາຍ ທີ່ບໍ່ມີໃບຢັ້ງຢືນສຸຂະພາບສັດທີ່ຖືກຕ້ອງ ໃບຢັ້ງຢືນການກັກກັນ ແລະ ເອກະສານທີ່ຈຳເປັນຕາມການແຈ້ງການທີ່ປະກາດໄວ້ ຢູ່ດ່ານກວດກາຊາຍແດນ ງົວ, ຄວາຍ ດັ່ງກ່າວ ຈະຕ້ອງໄດ້ສົ່ງກັບຄືນຫາປະເທດສົ່ງອອກ.

3) **ໃນກໍລະນີ ທີ່ລົດບັນທຸກມາຮອດດ່ານກວດກາຊາຍແດນຂາເຂົ້າບໍ່ໄດ້ປິດສະໜິດ ຫຼື ບໍ່ໄດ້ໜີບກົ່ວ:**
ເຈົ້າໜ້າທີ່ດ່ານກວດກາຊາຍແດນ ຕ້ອງແຈ້ງໃຫ້ຂະແໜງລ້ຽງສັດ ແລະ ການປະມົງຂັ້ນແຂວງ ຊາບ ໂດຍດ່ວນ ແລະ ຈະຕ້ອງຈະໄດ້ກວດກາງົວ, ຄວາຍ ຕົວຈິງໃນລົດບັນທຸກ ທຽບໃສ່ບັນຊີສັດທີ່ລະບຸໃນເອກະສານ ແລະ ຜູ້ຄ້າສັດ ຈະຖືກສຶກສາອົບຮົມ ແລະ ບັນທຶກໄວ້ຢ່າງເປັນລາຍລັກອັກສອນ.

4) **ໃນກໍລະນີທີ່ ສັດສະແດງອາການຜິດປົກກະຕິໃນລະຫວ່າງການຂົນສົ່ງ ຫຼື ປ່ຽນເສັ້ນທາງ:**
ຜູ້ເຄື່ອນຍ້າຍຕ້ອງແຈ້ງໃຫ້ໜ່ວຍງານລ້ຽງສັດ ແລະ ການປະມົງ ຂັ້ນເມືອງ ແລະ ຂະແໜງ ລ້ຽງສັດ ແລະ ການປະມົງຂັ້ນແຂວງ ທີ່ກ່ຽວຂ້ອງ ຊາບ ແລະ ຕ້ອງໄດ້ປະຕິບັດມາດຕະການຄວບຄຸມຕາມລະບຽບການຢ່າງເຂັ້ມງວດ ແລະ ບໍ່ອະນຸຍາດໃຫ້ຜູ້ຄ້າສັດເຄື່ອນຍ້າຍ ຂົນສົ່ງຕໍ່. ສ່ວນການປ່ຽນເສັ້ນທາງ ກໍຕ້ອງໄດ້ຮັບອະນຸຍາດຈາກເຈົ້າໜ້າທີ່ຂອງດ່ານຂາເຂົ້າ ແລະ ເຫັນດີຈາກອົງການຄຸ້ມຄອງທີ່ກ່ຽວຂ້ອງເສຍກ່ອນ.

ຂັ້ນຕອນ-10: ເມື່ອຜູ້ຄ້າສັດນຳງົວ, ຄວາຍ ໄປຮອດດ່ານຂາອອກແລ້ວ ຕ້ອງນຳເອກະສານໄປແຈ້ງເຈົ້າໜ້າທີ່ສັດຕະວະແພດຂອງດ່ານຂາອອກທັນທີ, ຈາກນັ້ນໃຫ້ເຈົ້າໜ້າທີ່ດ່ານຂາອອກກວດກາເອກະສານໂດຍສະເພາະແມ່ນ ໃບຢັ້ງຢືນການກວດກາຂອງດ່ານນຳເຂົ້າ ແບບພິມ ຂຜ-7 ແລະ ໃບອະນຸຍາດນຳເຂົ້າຂອງອົງການທີ່ມີອຳນາດຂອງປະເທດນຳເຂົ້າ ພ້ອມທັງ ກວດສະພາບການບັນຈຸສັດ ແລະ ສະພາບຂອງງົວ, ຄວາຍທີ່ຢູ່ໃນລົດຂົນສົ່ງ ວ່າມີຄວາມປົກກະຕິ ຫຼື ບໍ່ ຖ້າຫາກທຸກຢ່າງຖືກຕ້ອງ ແລະ ບໍ່ມີບັນຫາ ໃຫ້ ປ່ອຍສັດອອກຈາກດ່ານຂາອອກ. ຖ້າຫາກພົບເຫັນການຫາຍໄປ ຂອງການຂົນສົ່ງສິນຄ້າ ໃຫ້ເຈົ້າໜ້າທີ່ສັດຕະວະແພດດ່ານ ຂາເຂົ້າ-ຂາອອກ ແຈ້ງໃຫ້ຂະແໜງລ້ຽງສັດ ແລະ ການປະມົງ ແລະ ກົມລ້ຽງສັດ ແລະ ການປະມົງ ເພື່ອດຳເນີນມາດຕະການດ້ານກົດໝາຍຕາມລະບຽບການ;

ຂັ້ນຕອນ-11: ເຈົ້າໜ້າທີ່ດ່ານກວດກາສັດຕະວະແພດສາກົນຂາອອກ ບັນທຶກຂໍ້ມູນລົງໃນປື້ມບັນຊີສັດນຳເຂົ້າຜ່ານດ່ານ ໂດຍໃຫ້ມີການຕິດຕາມຕົວເລກ ແຜນສົ່ງຜ່ານລວມ, ການຫັກລົບຈຳນວນທີ່ສົ່ງຜ່ານອອກແລ້ວ ແລະ ຈຳນວນທີ່ຍັງເຫຼືອ ແລະ ແຈ້ງໃຫ້ເຈົ້າໜ້າທີ່ກວດກາສັດຕະວະແພດ ດ່ານຂາເຂົ້າຊາບ.

## 9. ການລາຍງານການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ງົວ, ຄວາຍມີຊີວິດ

ຫົວໜ້າດ່ານກວດກາສັດຕະວະແພດສາກົນ ຕ້ອງສັງລວມ ແລະ ສົ່ງບົດລາຍງານ ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ງົວ, ຄວາຍ ມີຊີວິດສົ່ງໃຫ້ຂະແໜງລ້ຽງສັດ ແລະ ການປະມົງຂັ້ນແຂວງ ແລະ ກົມລ້ຽງສັດ ແລະ ການປະມົງ ຊາບເປັນປະຈຳທຸກເດືອນ ໂດຍຂຽນບົດລາຍງານຕາມຮ່າງແບບພິມ ດັ່ງນີ້:

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກໍາ ແລະ ປ່າໄມ້

ກົມລ້ຽງສັດ ແລະ ການປະມົງ

ດ່ານກວດກາສັດຕະວະແພດສາກົນ..........................

ເລກທີ................/.........

ລົງວັນທີ.........................

## ບົດລາຍງານປະຈໍາເດືອນ................

ຮຽນ:.................................................................

- ອີງຕາມ......................................

ດ່ານກວດກາສັດຕະວະແພດສາກົນ......................................ຂໍຖືເປັນກຽດສະຫຼຸບລາຍງານ ການນໍາເຂົ້າ, ສົ່ງອອກ, ສົ່ງຜ່ານ ແລະ ມາດຕະການຕໍ່ຜູ້ກະທໍາຜິດລະບຽບ ຕໍ່ທ່ານຊາບ ດັ່ງນີ້:

ກ. ຕາຕະລາງສະຫຼຸບການນໍາເຂົ້າ

| ລ.ດ | ຊື່ບໍລິສັດ | ຊະນິດ ສັດ ທີ່ນໍາ ເຂົ້າ | ຈໍານວນ ອະນຸມັດ ຕາມແຜນນໍາ ເຂົ້າ | ຈໍານວນ ຄັ້ງນໍາເຂົ້າ ຕົວຈິງ | ຈໍາ ນວນ (ໂຕ) | ນໍ້າໜັກ (ໂຕນ) | ມູນຄ່າ ກີບ/ໂດ ລາ | ນໍາເຂົ້າມາ ຈາກ ປະເທດ | ເພື່ອ ຈຸດປະສົງ |
|---|---|---|---|---|---|---|---|---|---|
| 1 | | | | | | | | | |
| 2 | | | | | | | | | |
| 3 | | | | | | | | | |
| ... | | | | | | | | | |

## ຂ. ຕາຕະລາງສະຫຼຸບການສົ່ງອອກ

| ລ.ດ | ຊື່ບໍລິສັດ | ຊະນິດສັດ | ຈຳນວນອະນຸມັດຕາມແຜນສົ່ງອອກ | ຈຳນວນຄັ້ງທີ່ສົ່ງອອກຕົວຈິງ | ຈຳນວນ (ໂຕ) | ນ້ຳໜັກ (ໂຕນ) | ມູນຄ່າກີບ/ໂດລາ | ນຳເຂົ້າຈາກປະເທດ | ສົ່ງອອກໄປປະເທດ |
|---|---|---|---|---|---|---|---|---|---|
| 1 | | | | | | | | | |
| 2 | | | | | | | | | |
| 3 | | | | | | | | | |
| ..... | | | | | | | | | |

## ຄ. ຕາຕະລາງສະຫຼຸບການສົ່ງຜ່ານ

| ລ.ດ | ຊື່ບໍລິສັດ | ຊະນິດສັດ | ຈຳນວນອະນຸມັດຕາມແຜນສົ່ງຜ່ານ | ຈຳນວນຄັ້ງທີ່ສົ່ງຜ່ານຕົວຈິງ | ຈຳນວນ (ໂຕ) | ນ້ຳໜັກ (ໂຕນ) | ມູນຄ່າກີບ/ໂດລາ | ນຳເຂົ້າຈາກປະເທດ | ມາຈາກປະເທດ | ສົ່ງອອກໄປປະເທດ |
|---|---|---|---|---|---|---|---|---|---|---|
| 1 | | | | | | | | | | |
| 2 | | | | | | | | | | |
| 3 | | | | | | | | | | |
| ..... | | | | | | | | | | |

ງ. ຕາຕະລາງສັງລວມ ການເກັບຕົວຢ່າງ

| ລ.ດ | ລາຍການຕົວຢ່າງ | ຊະນິດສັດ | ຈຳນວນ ຕົວຢ່າງ | ຜົນການວິໄຈດ່ວນ | | ໝາຍເຫດ |
|---|---|---|---|---|---|---|
| | | | | ຜ່ານ | ບໍ່ຜ່ານ | |
| 1 | ເລືອດ | | | | | |
| 2 | ເລືອດໄສ | | | | | |
| 3 | ສວອບ | | | | | |
| 4 | ເນື້ອເຍື່ອ | | | | | |
| .... | ...... | | | | | |

ຈ. ຕາຕະລາງສັງລວມການກະທຳຜິດຂອງຜູ້ຄ້າສັດ

| ລ.ດ | ຊື່ບໍລິສັດ | ຊະນິດສັດ | ຈຳນວນຄັ້ງ | ຮູບແບບການກະທຳຜິດ | ໝາຍເຫດ |
|---|---|---|---|---|---|
| 1 | | | | | |
| 2 | | | | | |
| 3 | | | | | |
| ..... | | | | | |

ລາຍງານໂດຍ:

ຫົວໜ້າດ່ານກວດກາສັດຕະວະແພດສາກົນ...................................